# ບົດຂ່າວ

## ອົງການສະຫະປະຊາຊາດ: ການເພີ່ມຜົນຜະລິດແມ່ນກຸນແຈສູ່ການຊຸກຍູ້ການເຕີບໂຕທາງດ້ານເສດຖະກິດໃນອາຊີ-ປາຊີຟິກ

***ຄວາມຕ້ອງການພາຍໃນປະເທດ ແລະ ພາກພື້ນ ແລະ ການເພີ່ມຄ່າແຮງງານ ແມ່ນພາກຫົວໃຈຂອງການເຕີບໂຕແບບສົມສ່ວນ ແລະ ການພັດທະນາແບບຍືນຍົງຂອງພາກພື້ນ.***

ນະຄອນຫຼວງວຽງຈັນ, 5 ພຶດສະພາ 2016 - ດັ່ງທີ່ຫຼາຍປະເທດເລີ່ມການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ ເພື່ອໃຫ້ສຳເລັດພາຍໃນປີ 2030, ບາດກ້າວຕໍ່ໄປຂອງການເຕີບໂຕທາງດ້ານເສດຖະກິດໃນອາຊີ-ປາຊີຟິກ ຄວນໄດ້ຮັບການຂັບເຄື່ອນຈາກຜົນໄດ້ຮັບຈາກການຜະລິດຢ່າງກວ້າງຂວາງ. ອົງການສະຫະປະຊາຊາດ ເພື່ອການພັດທະນາເສດຖະກິດ ແລະ ສັງຄົມ ຢູ່ອາຊີ ແລະ ປາຊີຟິກ ໄດ້ເນັ້ນໜັກໃນເອກະສານ *ປື້ມສຳຫຼວດສະພາບເສດຖະກິດ ແລະ ສັງຄົມ ຢູ່ອາຊີ ແລະ ປາຊີຟິກ ປະຈຳປີ 2016* ວ່າ ການສົ່ງເສີມການຜະລິດດັ່ງກ່າວຕ້ອງໄດ້ນຳໃຊ້ງົບປະມານເພີ່ມຂຶ້ນ ແລະ ສອດຄ່ອງກັບເປົ້າໝາຍ, ພັດທະນາທັກສະ, ປັບປຸງພື້ນຖານໂຄງລ່າງ ແລະ ຍົກສູງການຜະລິດດ້ານກະສິກຳ. ໃນປື້ມສຳຫຼວດຫົວຂໍ້ *ການສົ່ງເສີມການຜະລິດ ເພື່ອການເຕີບໂຕແບບສົມສ່ວນ ແລະ ການພັດທະນາແບບຍືນຍົງ* ໄດ້ເນັ້ນໜັກວ່າ ການວາງຍຸດທະສາດຈະຊ່ວຍປັບປຸງຄຸນນະພາບຂອງການເຕີບໂຕທາງດ້ານເສດຖະກິດໄປສູ່ຄວາມສົມສ່ວນ ແລະ ຄວາມຍືນຍົງ.

ໃນທົ່ວພາກພື້ນ, ເສດຖະກິດໄດ້ມີການຂະຫຍາຍຕົວຊ້າ ໂດຍສ່ວນໜຶ່ງແມ່ນມາຈາກການຜະລິດທີ່ຫຼຸດລົງຕັ້ງແຕ່ປີ 2008.

ການເຕີບໂຕທາງດ້ານເສດຖະກິດຂອງ ສປປ ລາວ ແມ່ນຫຼຸດລົງຈາກອັດຕາເກືອບ 8 ເປີເຊັນຕໍ່ປີ ມາເປັນ 6.4% ໃນ 2015. ອັດຕາການເຕີບໂຕທີ່ສູງນີ້ແມ່ນເນື່ອງມາຈາກລາຍຮັບຈາກພະລັງງານໄຟຟ້າ ແລະ ການຂຸດຄົ້ນບໍ່ແຮ່ເປັນຕົ້ນຕໍ. ໃນຂະແໜງກະສິກຳມີການຈ້າງແຮງງານປະມານສອງສ່ວນສາມຂອງແຮງງານທັງໝົດ ແຕ່ວ່າຜົນການຜະລິດຍັງຕໍ່າ. ສິ່ງທີ່ຍັງຄົງເປັນບຸລິມະສິດແມ່ນຄວາມຫຼາກຫຼາຍທາງດ້ານເສດຖະກິດ ແລະ ອຸດສາຫະກຳທີ່ເພີ່ມຂຶ້ນ. ການພັດທະນາການທ່ອງທ່ຽວ ແລະ ການຜະລິດໂດຍໃຊ້ແຮງງານ ເຊັ່ນວ່າ ການຜະລິດເສື້ອຜ້າ ຈະຊ່ວຍຂະຫຍາຍໂອກາດການຈ້າງງານເພີ່ມຂຶ້ນ.

ອົງການສະຫະປະຊາຊາດ ເພື່ອການພັດທະນາເສດຖະກິດ ແລະ ສັງຄົມຢູ່ອາຊີ ແລະ ປາຊີຟິກ ແນະນຳໃຫ້ປະເທດຕ່າງໆເພີ່ມຄວາມພະຍາຍາມກະຕຸ້ນຄວາມຕ້ອງການພາຍໃນປະເທດ ແລະ ພາກພື້ນ ເພື່ອຊຸກຍູ້ການເຕີບໂຕທາງດ້ານເສດຖະກິດ, ຄວນສຸມໃສ່ການສົ່ງເສີມການຜະລິດ ແລະ ການເພີ່ມຄ່າແຮງງານ.

ມື້ນີ້ໃນພິທີເຜີຍແຜ່ປຶ້ມສຳຫຼວດ, ທ່ານ ດຣ. ລີເບີ ລີບົວປາວ, ຫົວໜ້າສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ໄດ້ກ່າວວ່າ ລັດຖະບານເລີ່ມດຳເນີນການສົ່ງເສີມຄວາມຕ້ອງການພາຍໃນພາກພື້ນຮຽບຮ້ອຍແລ້ວ: "ແຜນພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດຄັ້ງທີ 8 ຈະເນັ້ນໃສ່ນັກລົງທຶນໃນພາກພື້ນ ເພື່ອຂະຫຍາຍໂອກາດການພັດທະນາເສດຖະກິດ ແລະ ການເງິນ."

"ການຂະຫຍາຍການຜະລິດແມ່ນມີຄວາມສຳຄັນສຳລັບໝົດທຸກປະເທດໃນພາກພື້ນ ເພື່ອຊຸກຍູ້ການເຕີບໂຕຂອງເສດຖະກິດ", ກ່າວໂດຍ ທ່ານ ອາລເບີໂຕ ອິສກັດ ຈາກພະແນກນະໂຍບາຍເສດຖະກິດມະຫາພາກ ແລະ ການພັດທະນາ ຂອງອົງການສະຫະປະຊາຊາດ ເພື່ອການພັດທະນາເສດຖະກິດ ແລະ ສັງຄົມຢູ່ອາຊີ ແລະ ປາຊີຟິກ ທີ່ໄດ້ຂຶ້ນສະເໜີຜົນການສຳຫຼວດ. "ສຳລັບ ສປປ ລາວ, ສິ່ງສຳຄັນໃນການຫຼຸດຜ່ອນຄວາມບໍ່ສະເໝີພາບແມ່ນການເພີ່ມຄ່າໃຊ້ຈ່າຍທາງສັງຄົມ ແລະ ການສ້າງຄວາມຫຼາກຫຼາຍທາງດ້ານເສດຖະກິດ. ໃນໄລຍະຜ່ານມາ, ການເຕີບໂຕທາງດ້ານເສດຖະກິດທີ່ສູງຂອງປະເທດ ຍັງບໍ່ທັນພຽງພໍໃນການແກ້ໄຂຄວາມທຸກຍາກ."

ຈົບ

ໝາຍເຫດເຖິງບັນນາທິການ:

*ປຶ້ມສຳຫຼວດສະພາບເສດຖະກິດ ແລະ ສັງຄົມຢູ່ອາຊີ ແລະ ປາຊີຟິກ ຂອງອົງການສະຫະປະຊາຊາດ ເພື່ອການພັດທະນາເສດຖະກິດ ແລະ ສັງຄົມ* ແມ່ນຈັດພິມທຸກໆປີ ເຊິ່ງໄດ້ຕິດຕາມຄວາມກ້າວໜ້າໃນພາກພື້ນ, ສະໜອງການວິເຄາະ ແລະ ແນະນຳການປຶກສາຫາລືດ້ານນະໂຍບາຍ ກ່ຽວກັບບັນຫາເສດຖະກິດ ແລະ ສັງຄົມທີ່ພົ້ນເດັ່ນໃນປະຈຸບັນ ລວມທັງສິ່ງທ້າທາຍດ້ານນະໂຍບາຍ ເພື່ອສະໜັບສະໜູນການພັດທະນາແບບສົມສ່ວນ ແລະ ຍືນຍົງໃນພາກພື້ນ.

ສຳລັບປຶ້ມສຳຫຼວດ ສາມາດເຂົ້າໄປເວັບໄຊ: http://www.unescap.org/publications/economic-and-socialsurvey-asia-pacific

ສຳລັບຂໍ້ມູນເພີ່ມຕື່ມ ກະລຸນາຕິດຕໍ່:
ເຄທີ ເອວເລສ, ເຈົ້າໜ້າທີ່ຂໍ້ມູນຂ່າວສານ, ພະແນກສື່ສານ ແລະ ໂຄສະນາດ້ານນະໂຍບາຍ,
ESCAP, M: (66) 9481 525 36 / E: elles@un.org